# ຜູ້ນຳລາວຕ້ອນຮັບຜູ້ແທນແນວໂຮມປະເທດຊາດຫວຽດນາມ.



*(ຂປລ): ບັນດາທ່ານຜູ້ນຳລາວ ປະກອບມີ ທ່ານ ຈູມມາລີ ໄຊຍະສອນ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ, ປະທານປະເທດ, ທ່ານ ທອງສິງ ທຳມະວົງ, ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ຕ່າງກໍໄດ້ໃຫ້ກຽດຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງ ທ່ານ ຮວີ່ງດ່າມ, ກຳມະການ ສູນກາງພັກກອມມູນິດຫວຽດນາມ, ປະທານຄະນະກຳມະການສູນກາງແນວໂຮມປະເທດຊາດ ຫວຽດນາມ ພ້ອມຄະນະ ແລະຄະນະຜູ້ແທນຄົນລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ ໃນວັນທີ 13 ສິງຫາ 2010 ນີ້ ໃນໂອກາດທີ່ເດີນທາງມາຮ່ວມງານສະເຫລີມສະຫລອງ ວັນສ້າງຕັ້ງສູນກາງແນວລາວສ້າງຊາດ ຄົບຮອບ 60 ປີ. ບັນດາທ່ານຜູ້ນຳຕ່າງກໍໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການມາຮ່ວມງານສະເຫລີມສະຫລອງ ວັນສ້າງຕັ້ງສູນກາງແນວລາວສ້າງຊາດ ຂອງ ຄະນະຜູ້ແທນດັ່ງກ່າວ ໂດຍສະເພາະແມ່ນ ການມາຢ້ຽມຢາມ ຂອງຄະນະແນວໂຮມປະເທດຊາດ ຫວຽດນາມ ຊຶ່ງເປັນການປະກອບສ່ວນສຳຄັນເຂົ້າໃນການ ເສີມຂະຫຍາຍສາຍພົວພັນມິດຕະພາບ ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໃຫ້ນັບມື້ກ້າວໜ້າຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ. ໃນ ວັນດຽວກັນ ທ່ານ ດຣ. ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງ ປະເທດ ກໍໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງ ຄະນະຜູ້ແທນຄົນລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ ເຊັ່ນດຽວກັນ./